# ບົດຂ່າວ

**ພິທີລົງນາມບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ ການຮ່ວມມືດ້ານການບໍລິການທະນາຄານ ລະຫວ່າງ ທຄຕລ ແລະ ທະນາຄານ KEB Hana ຈາກ ສ. ເກົາຫຼີ. ວັນທີ 14 ກໍລະກົດ 2017.**




ໃນວັນທີ 14 ກໍລະກົດ 2017 ທີ່ຜ່ານມາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ທະນາຄານ ເຄບີ ຮານາ (KEB Hana Bank) ຈາກ ສ. ເກົາຫຼີ ໄດ້ຈັດພິທີລົງນາມບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ ການຮ່ວມມືດ້ານການບໍລິການທະນາຄານ. ການລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ: ທ່ານ ລາໃຈ ຄັນພຣະວົງສ໌, ຮອງຜູ້ອຳນວຍການ ທຄຕລ ແລະ ທ່ານ ຄິມ ບູມ ເລ ຜູ້ຈັດການຝ່າຍດູແລລູກຄ້າ ແລະ ການລົງທຶນຕ່າງປະເທດ, ທະນາຄານ ເຄບີ ຮານາ ໂດຍການໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນ ຄັ້ງນີ້ປະກອບມີ:

1. **ທ່ານ ພູຂົງ ຈັນທະຈັກ**, ຜູ້ອຳນວຍໃຫຍ່, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
2. **ທ່ານ ຄິມ ບູມ ເລ (Mr. Kim, Beom-Rae)**, ຜູ້ຈັດການຝ່າຍດູແລລູກຄ້າ ແລະ ການລົງທຶນຕ່າງປະເທດ, ທະນາຄານເຄບີ ຮານາ
3. **ທ່ານ ໜູໄຊ ພູມສຸວັນ**, ຮອງຫົວໜ້າກົມບໍລິການ, ທະນາຄານແຫ່ງ ສ.ປ.ປ ລາວ (ທຫລ)

ພ້ອມດ້ວຍ ຄະນະອຳນວຍການ ທຄຕລ, ຄະນະອຳນວຍການ ສູນບໍລິການຈັດຫາງານ, ຜູ້ອຳນວຍການ HRD Korea, ສູນ EPS ປະຈຳລາວ, , ຄະນະພະແນກ, ຄະນະສາຂາ, ຄະນະສູນ, ພະນັກງານ ທຄຕລ, ພະນັກງງານ ທຫລ ແລະ ສື່ມວນຊົນຈາກ ຫລາຍພາກສ່ວນ.

ການຮ່ວມມືລະຫວ່າງ ທຄຕລ ແລະ ທະນາຄານ ເຄບີ ຮານາ ຈາກ ສ. ເກົາຫຼີ, ໄດ້ມີການລະເລີ່ມສາຍພົວພັນຕັ້ງແຕ່ປີ 2016 ທີ່ຜ່ານມາ ດ້ານການສົ່ງເສີມດ້ານການຄ້າ ຫລື Banking Arrangement ໂດຍສະເພາະໂຄງການຂອງລັດຖະບານລາວ ແລະ ລັດຖະບານ ສ.ເກົາຫຼີ. ນອກຈາກນີ້, ທຄຕລ ໄດ້ມີເປີດບັນຊີ ກັບທາງທະນາຄານ ເຄບີ ຮານາ ເພື່ອຮັບຮອງທຸລະກຳການໂອນເງິນລະຫວ່າງລາວ-ເກົາຫຼີ ໂດຍສະເພາະ ເພື່ອຮອງຮັບການໂອນເງິນກັບ ບ້ານຂອງ ບັນດາແຮງງານລາວໄປເຮັດວຽກທີ່ ສ. ເກົາຫຼີ ແລະ ນັກສຶກສາລາວ ທີ່ໄປສຶກສາຢູ່ທີ່ ສ. ເກົາຫຼີ ກໍ່ຄືລູກຄ້າທົ່ວໄປ ຂອງທັງສອງທະນາຄານ.




ທ່ານ ລາໃຈ ຄັນພຣະວົງສ໌, ຮອງຜູ້ອຳນວຍການ ທຄຕລ ໄດ້ກ່າວໃນພິທີວ່າ: ປະຈຸບັນການໂອນ ເງິນຈາກ ລາວໄປປະເທດເກົາຫຼີ ຫລື ຈາກເກົາຫຼີມາລາວຜ່ານທາງ ທຄຕລ ແລະ ທະນາຄານ ເຄບີ ຮານາ ແມ່ນສາມາດໂອນໄດ້ໂດຍກົງ ໂດຍບໍ່ຜ່ານທະນາຄານຕົວແທນທີ່ຕ່າງປະເທດ ເຊິ່ງຈະເຮັດໃຫ້ລູກຄ້າໄດ້ຮັບເງິນໄວ ແລະ ຄ່າທຳນຽມ ບໍ່ສູງ. ນອກຈາກນັ້ນ, ທັງສອງທະນາຄານຍັງຈະໄດ້ສືບຕໍ່ໃນການພັດທະນາການບໍລິການຕ່າງໆ ຮ່ວມກັນໃນອະນາຄົດເພື່ອຮັບໃຊ້ສັງຄົມ.

ທ່ານ ຄິມ ບູມ ເລ, ຜູ້ຈັດການຝ່າຍດູແລລູກຄ້າ ແລະ ການລົງທຶນຕ່າງປະເທດ, ທະນາຄານ ເຄບີ ຮານາ ໄດ້ກ່າວໃນພິທີວ່າ: ທຄຕລ ແລະ ທະນາຄານ ເຄບີ ຮານາ ແມ່ນມີຄວາມຄ້າຍຄືກັນໂດຍພື້ນຖານ. ທະນາຄານ ເຄບີ ຮານາ ຄືກັບ ທຄຕລ ທີ່ມີຈຸດເລີ່ມຕົ້ນເປັນທະນາຄານລັດທີ່ມີພາລະກິດປະຕິບັດດ້ານການທະນາຄານສາກົນ, ການເງິນເພື່ອການຄ້າ ແລະ ໄດ້ເຕີບໃຫຍ່ຂະຫຍາຍຕົວເປັນທະນາຄານທຸລະກິດທີ່ໂດດເດັ່ນສຳລັບລູກຄ້າລາຍໃຫຍ່ ໃນໄລຍະທີ່ເສດຖະກິດມະຫາພາກຂອງ ສ. ເກົາຫຼີ ໄດ້ມີການຂະຫຍາຍຕົວ. ນັບແຕ່ ສ. ເກົາຫຼີ ໄດ້ປະກາດເອກະລາດໃນປີ 1967, ທະນາຄານ ເຄບີ ຮານາ ໄດ້ກາຍເປັນທະນາຄານໃນແຖວໜ້າຂອງປະເທດ ໂດຍສະເພາະດ້ານແລກປ່ຽນເງິນຕາ, ການຊຳລະສະສາງສາກົນ, ບໍລິການເງິນລົງທຶນຈາກຕ່າງປະເທດ,ເງິນໂອນຕ່າງປະເທດ, ບໍລິການການເງິນເພື່ອການຄ້າ ແລະ ອີກຫລາຍໆບໍລິການສາກົນ. ຈຸດປະສົງຫຼັກຂອງການຮ່ວມມືກັບ ທຄຕລ ແມ່ນເພື່ອສົ່ງເສີມການຕະຫລາດດ້ານເງິນໂອນຕ່າງປະເທດສຳລັບແຮງງານຈາກລາວທີ່ໄປເຮັດວຽກທີ່ ສ. ເກົາຫຼີ. ທະນາຄານເຄບີ ຮານາ ມີຄວາມຕັ້ງໃຈທີ່ຈະຮ່ວມມືກັບທະນາຄານທີ່ດີທີ່ສຸດໃນລາວ ກໍ່ຄື BCEL, ເຄບີ ຮານາ ຫວັງວ່າຈະໄດ້ເຫັນໝາກຜົນຄວາມສຳເລັດ ແລະ ຜົນປະໂຫຍດທີ່ຈະມາສູ່ທັງສອງຝ່າຍໃນຫລາຍໆດ້ານ ໃນອະນາຄົດອັນໃກ້ນີ້.

ວັນທີ 14 ກໍລະກົດ 2017, ຂ່າວໂດຍ: ກອງເລຂາ ແລະ ພົວພັນສາກົນ
ພາບໂດຍ: ທ້າວ ສຸລິຍົງ ສຸກຈັນດີ